**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ກົມຄຸ້ມຄອງຊັບສິນແຫ່ງລັດ ເລກທີ 4045/ຄຊລ

ນະຄອນຫຼວງວຽງຈັນ, ວັນທີ 25 ມິຖຸນາ 2025

## ໜັງສືແຈ້ງເຊີນປະມູນ

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງຊັບສິນ ແຫ່ງລັດ ສະບັບເລກທີ 6199/ກງ, ລົງວັນທີ 16 ທັນວາ 2021;
- ອີງຕາມ ຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບຈັດຊື້ພາຫະນະຂອງຫ້ອງວ່າການສໍານັກງານປະທານປະເທດ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ ສະບັບເລກທີ 1861/ກງ, ລົງວັນທີ 24 ມິຖຸນາ 2025.
- ອີງຕາມ ບົດບັນທຶກກອງປະຊຸມຂອງຄະນະຮັບຜິດຊອບ ໂດຍການເປັນປະທານຂອງທ່ານຮອງຫົວໜ້າຫ້ອງການອົງການກວດສອບແຫ່ງລັດ ຄັ້ງວັນທີ 25 ມິຖຸນາ 2025.

1. ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ໄດ້ຮັບອະນຸມັດງົບປະມານ ເພື່ອຈັດຊື້ລົດປະກອບຮັບໃຊ້ວຽກງານຂອງຫ້ອງວ່າການສໍານັກງານປະທານປະເທດ, ຄະນະກວດກາສູນກາງພັກ-ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ ຈໍານວນ 7 ຄັນ(ປະເພດລົດຈີບ 2 ຄັນ, ລົດກະບະ 5 ຄັນ)ໃນປີ 2025;
2. ຂໍເຊີນບັນດາບໍລິສັດທີ່ມີຄວາມເໝາະສົມ,ມີເງື່ອນໄຂຄົບຖ້ວນ ເຂົ້າຮ່ວມຍື່ນຊອງປະມູນແບບເປີດກ້ວາງ ສໍາລັບການຈັດຊື້ພາຫະນະຈໍານວນ 7 ຄັນດັ່ງກ່າວ. ໂດຍກໍານົດໄລຍະເວລາ ມອບ-ຮັບລົດ ແມ່ນພາຍໃນເວລາ 30 ວັນ ນັບແຕ່ເຊັນສັນຍາ;
3. ການປະມູນດໍາເນີນຕາມຂັ້ນຕອນການປະມູນແບບເປີດກ້ວາງ ຕາມທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
4. ບັນດາບໍລິສັດທີ່ມີຄຸນວຸດທິເໝາະສົມ ທີ່ສົນໃຈສາມາດຕິດຕໍ່ພົວພັນ ແລະ ຊື້ຊອງປະມູນໄດ້ທີ່ ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ຊັ້ນ 3 (ຕຶກ E) ທີ່ຕັ້ງຢູ່: ບ້ານໂພນໄຊ, ເມືອງ ໄຊເຊດຖາ ນະຄອນຫຼວງວຽງຈັນ, ເບີໂທ: 021 263252 ເລີ່ມຂາຍຊອງປະມູນແຕ່ວັນທີ 27 ມິຖຸນາ 2025 ຫາວັນທີ 16 ກໍລະກົດ 2025 ໃນໂມງເວລາທາງລັດຖະການ, ໃນລາຄາ 7 ລ້ານກີບຕໍ່ຊອງ;
5. ຊອງປະຊຸມຕ້ອງສົ່ງກ່ອນ 09:00ໂມງ, ຂອງວັນທີ 17 ກໍລະກົດ 2025 ທີ່ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ຊັ້ນ 3 (ຕຶກ E) ແລະ ຊອງຈະໄດ້ເປີດໃນເວລາ 09:00ໂມງ, ຂອງວັນທີ 17 ກໍລະກົດ 2025 ໂດຍຊ່ອງໜ້າຄະນະກໍາມະການຈັດຊື້ ແລະ ບັນດາບໍລິສັດທີ່ເຂົ້າຮ່ວມການປະມູນ;
6. ທຸກຊອງປະມູນຕ້ອງປະກອບເອກະສານຕາມເງື່ອນໄຂທີ່ໄດ້ກໍານົດໃນຊຸດເອກະສານປະມູນຢ່າງຄົບຖ້ວນ.

ຫົວໜ້າກົມຄຸ້ມຄອງຊັບສິນແຫ່ງລັດ

(ຕາງໜ້າຄະນະຮັບຜິດຊອບ)

ສົມບູນ ແກ່ນປະເສີດ

Somboun KENPASEUTH

Scanned with CamScanner